ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ ເລກທີ 0374 /ກງ

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2021

# ແຈ້ງການ

ເຖິງ: ທ່ານຜູ້ອຳນວຍການ ວິສາຫະກິດ ສ່ວນບຸກຄົນ, ນິຕິບຸກຄົນ ທີ່ເປັນນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຈັດຕັ້ງປະຕິບັດ ການຍື່ນເອກະສານລາຍງານການເງິນປະຈຳປີ 2020

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບປັບປຸງ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ແຈ້ງການ ຂອງທ່ານຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 1025/ກງ, ລົງວັນທີ 03 ເມສາ 2019.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເພື່ອເປັນການສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ແກ່ວິສາຫະກິດ ສ່ວນບຸກຄົນ, ນິຕິບຸກຄົນ ໄດ້ມີການກະກຽມ **ການຍື່ນເອກະສານລາຍງານການເງິນປະຈຳປີ 2020 ຊຶ່ງມີກຳນົດ ບໍ່ໃຫ້ກາຍ ວັນທີ 31 ມີນາ 2021**. ສຳລັບຂັ້ນຕອນ ແລະເອກະສານໃນການຍື່ນບົດສະຫລຸບການເງິນປະຈຳປີ 2020 ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍກຳນົດໄວ້ ຄືເກົ່າ, ຖ້າຫາກຍື່ນບົດສະຫລຸບການເງິນດັ່ງກ່າວ ກາຍກຳນົດເວລາທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ ຈະປະຕິບັດມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ຢ່າງເຄັ່ງຄັດ.

ໃຫ້ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ, ສ່ວຍສາອາກອນປະຈຳເມືອງ, ນະຄອນ ກະກຽມກວດກາ ແລະ ຕິດຕາມ ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ທຸລະກິດ ໃນການຍື່ນເອກະສານລາຍງານການເງິນປະຈຳປີ 2020 ແລະ ປະຕິບັດຕໍ່ຜູ້ລະເມີດ ຕາມລະບຽບກົດໝາຍຢ່າງເຄັ່ງຄັດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີກະຊວງການເງິນ

ກະຊວງການເງິນ
ລັດຖະມົນຕີ

ສົມດີ ດວງດີ